## ມິຊາອາທິດທີ 2 ກຳນົດປາສກາ

## ວັນທີ 24 ເມສາ 2022



**ພຣະວໍລະສານໂດຍນັກບຸນຢວງ 20, 19-31**

ໃນວັນຕົ້ນອາທິດເວລາຕົກຄໍ່າ, ແລະປະຕູບ່ອນພວກລູກສິດໂຮມກັນຢູ່ນັ້ນກໍອັດໄວ້ຢ່າງແໜ້ນຍ້ອນຢ້ານພວກຢູເດວ. ພຣະເຢຊູເຈົ້າສະເດັດມາປະທັບຢືນຢູ່ກາງພວກເຂົາກ່າວວ່າ: ສັນຕິສຸກຈົ່ງມີແກ່ພວກເຈົ້າ. ກ່າວແລ້ວພຣະອົງກໍຊົງສຳແດງພຣະຫັດແລະພຣະສີຂ້າງໃຫ້ພວກລູກສິດເບິ່ງ. ພວກລູກສິດພາກັນຊື່ນຊົມຍິນດີໄດ້ເຫັນພຣະອົງເຈົ້າ. ພຣະອົງກ່າວເປັນຄັ້ງທີສອງວ່າ: ສັນຕິສຸກຈົ່ງມີແກ່ພວກເຈົ້າ. ພຣະບິດາໄດ້ສົ່ງເຮົາມາແນວໃດ ເຮົາກໍສົ່ງພວກເຈົ້າໄປແນວນັ້ນດ້ວຍ.

ແລ້ວພຣະອົງຊົງເປົ່າໃສ່ພວກເຂົາພ້ອມກັບກ່າວວ່າ: ຈົ່ງຮັບພຣະຈິດເຈົ້າ, ພວກເຈົ້າໂຜດບາບໃຫ້ຜູ້ໃດ, ບາບຜູ້ນັ້ນກໍຈະຫລຸດ. ແລະພວກເຈົ້າໜ່ວງຈອງບາບຜູ້ໃດໄວ້, ບາບຜູ້ນັ້ນກໍຈະຍັງຄ້າງຄາຢູ່.

ສ່ວນໂທມາສທີ່ຊື່ວ່າ ດີດີມ, ຜູ້ໜຶ່ງໃນພວກລູກສິດສິບສອງຄົນ, ບໍ່ໄດ້ຢູ່ນຳໝູ່ເວລາພຣະເຢຊູເຈົ້າປະຈັກມາ. ພວກລູກສິດອື່ນໆຈຶ່ງບອກກັບໂທມາສວ່າ: ພວກເຮົາໄດ້ເຫັນພຣະອົງເຈົ້າແລ້ວ. ໂທມາສຕອບວ່າ: ຖ້າເຮົາບໍ່ໄດ້ເຫັນຮອຍຕະປູຢູ່ທີ່ພຣະຫັດ, ບໍ່ໄດ້ເອົານິ້ວມືແຫງເຂົ້າຮອຍຕະປູນັ້ນ ແລະບໍ່ໄດ້ເອົາມືແຫງເຂົ້າຮອຍບາດບ່ອນພຣະສີຂ້າງແລ້ວ ເຮົາກໍຈະບໍ່ເຊື່ອ.

ແປດມື້ຕໍ່ມາ, ພວກລູກສິດກໍໂຮມກັນອີກແລະໂທມາສກໍຢູ່ນຳດ້ວຍ. ພຣະເຢຊູເຈົ້າສະເດັດມາໂດຍປະຕູຍັງອັດຢູ່. ພຣະອົງປະທັບຢືນຢູ່ກາງພວກເຂົາແລະກ່າວວ່າ: ສັນຕິສຸກຈົ່ງມີແກ່ພວກເຈົ້າ. ຈາກນັ້ນ, ພຣະອົງກ່າວກັບໂທມາສວ່າ: ຈົ່ງເອົານິ້ວມືຂອງເຈົ້າແຫງເຂົ້າບ່ອນນີ້ແລະຈົ່ງເບິ່ງມືຂອງເຮົາ. ຈົ່ງເອົາມືແຫງເຂົ້າສີຂ້າງຂອງເຮົາ. ຢ່າດື້ດຶງອີກ ແຕ່ຈົ່ງເຊື່ອເຖີດ. ໂທມາສເລີຍຂາບທູນວ່າ: ພຣະອົງເຈົ້າແລະພຣະເປັນເຈົ້າຂອງຂ້າພະເຈົ້າ! ພຣະເຢຊູເຈົ້າກ່າວວ່າ: ໂທມາສເອີຍ, ເຈົ້າເຊື່ອຍ້ອນເຈົ້າໄດ້ເຫັນເຮົາ. ບຸນລາບແກ່ຜູ້ທີ່ບໍ່ເຫັນແຕ່ເຊື່ອ.

ພຣະເຢຊູເຈົ້າຊົງທຳອັດສະຈັນອື່ນໆອີກຫລາຍຕໍ່ໜ້າພວກລູກສິດ ແຕ່ບໍ່ໄດ້ບັນທຶກໄວ້ໃນໜັງສືເຫລັ້ມນີ້. ສິ່ງເຫລົ່ານີ້ໄດ້ຂຽນບັນທຶກໄວ້ກໍເພື່ອໃຫ້ພວກທ່ານເຊື່ອວ່າ ພຣະເຢຊູແມ່ນພຣະກຣິສໂຕພຣະບຸດຂອງພຣະເປັນເຈົ້າ ແລະເມື່ອເຊື່ອດັ່ງນີ້ແລ້ວ ພວກທ່ານຈະໄດ້ຊີວິດເດຊະພຣະນາມຂອງພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານແລະພຣະວໍລະສານໃນວັນອາທິດນີ້ລ້ວນແຕ່ຍົກໃຫ້ພວກເຮົາເຫັນເຖິງພາລະກິດຂອງພຣະເຢຊູເຈົ້າຊຶ່ງພຣະອົງໄດ້ກະທຳເມື່ອເວລາຍັງຢູ່ໃນໂລກນີ້ ແລະການສືບຕໍ່ພາລະກິດນີ້ຈາກພວກອັກຄະສາວົກ. ພາລະກິດນັ້ນແມ່ນການຍົກໂທດໂຜດບາບ, ເພື່ອໃຫ້ທຸກຄົນໄດ້ພົບກັບສັນຕິສຸກທີ່ແທ້ຈິງຈາກການໃຫ້ອະໄພຂອງພຣະເຢຊູເຈົ້າ. ດ້ວຍເຫດນີ້, ເມື່ອພຣະເຢຊູເຈົ້າກັບເປັຣຄືນມາຈາກຄວາມຕາຍແລະປະຈັກໃຫ້ພວກສາວົກເຫັນ. ຄຳເວົ້າທຳອິດທີ່ພຣະອົງກ່າວກັບພວກເຂົາຄື: "ສັນຕິສຸກຈົ່ງມີແກ່ພວກເຈົ້າ". ຄຳເວົ້ານີ້ບໍ່ແມ່ນຄຳທັກທາຍ, ຄຳອວຍພອນຈາກພຣະເຢຊູເຈົ້າ, ແຕ່ແມ່ນຄຳເວົ້າແຫ່ງການໃຫ້ອະໄພແກ່ພວກສາວົກ. ຍ້ອນກ່ອນນັ້ນ, ພວກເຂົາໄດ້ປະຕິເສດພຣະເຢຊູເຈົ້າແລະປະຖິ້ມພຣະອົງ. ແຕ່ວັນນີ້, ວັນຊຶ່ງພຣະເຢຊູເຈົ້າໄດ້ໄຊຊະນະຄວາມຕາຍ, ສິ່ງທຳອິດທີ່ພຣະເຢຊູເຈົ້າກະທຳຄືຊ່ວຍພວກລູກສິດໃຫ້ອອກຈາກຄວາມຢ້ານກົວ, ຄວາມກິນແໜງໃຈຍ້ອນໄດ້ປະຖິ້ມພຣະອົງ. ດ້ວຍເຫດນີ້, ພຣະອົງຈຶ່ງນຳສັນຕິສຸກແຫ່ງການໃຫ້ອະໄພມາໃຫ້ພວກເຂົາ. ເມື່ອໄດ້ຍິນຄຳເວົ້ານີ້ຂອງພຣະເຢຊູເຈົ້າ, ພວກລູກສິດຕ່າງກໍມີຄວາມຍິນດີ. ຍ້ອນພວກເຂົາໄດ້ຄືນດີກັບພຣະອົງຜູ້ໄດ້ໄຊຊະນະແລະຜາບແພ້ບາບອັນເປັນທີ່ມາຂອງຄວາມຕາຍ.

ເມື່ອພວກສາວົກໄດ້ມີປະສົບການແຫ່ງການໃຫ້ອະໄພຈາກພຣະເຢຊູເຈົ້າແລ້ວ, ພຣະອົງຈຶ່ງທຳໃຫ້ພວກເຂົາເປັນເຄື່ອງມືແຫ່ງການໃຫ້ອະໄພຂອງພຣະອົງ. ດ້ວຍການປະທານພຣະຈິດແລະອຳນາດແຫ່ງການຍົກບາບໃຫ້ພວກເຂົາ. ເພື່ອພວກເຂົາຈະໄດ້ສືບຕໍ່ພາລະກິດຂອງພຣະເຢຊູເຈົ້າບົນແຜ່ນດິນນີ້. ແລະເພື່ອໃຫ້ທຸກຄົນໄດ້ຮັບສັນຕິສຸກທີ່ແທ້ຈິງຊຶ່ງມາຈາກການອະໄພໂທດຈາກພຣະເຢຊູເຈົ້າ.

ແຕ່ເພື່ອຈະໄດ້ຮັບພຣະຄຸນແຫ່ງການໃຫ້ອະໄພຈາກພຣະເຢຊູເຈົ້ານີ້, ສິ່ງຈຳເປັນຊຶ່ງພວກເຮົາຕ້ອງມີຄື ຄວາມເຊື່ອໃນພຣະອົງຢ່າງແທ້ຈິງແລະໃນຜູ້ຊຶ່ງພຣະອົງຊົງສົ່ງມາຄືບັນດາພວກສາວົກ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວກັບໂທມາຜູ້ຊຶ່ງຂາດຄວາມເຊື່ອໃນພຣະອົງວ່າ: "ບຸນລາບແກ່ຜູ້ທີ່ບໍ່ໄດ້ເຫັນ ແຕ່ເຊື່ອ". ເພາະຄວາມເຊື່ອນີ້ຈະທຳໃຫ້ພວກເຮົາໄດ້ພົບກັບພຣະເຢຊູເຈົ້າໃນຊີວິດຂອງພວກເຮົາຜ່ານທາງເຄື່ອງໝາຍແຫ່ງສັນຕິສຸກຢູ່ໃນຈິດໃຈຂອງພວກເຮົາ. ເພາະພຣະອົງແມ່ນກະສັດແຫ່ງສັນຕິສຸກ.

**ພາວະນາ**

ໂອພຣະເຢຊູເຈົ້າ ໃນຊ່ວງກຳນົດແຫ່ງການກັບເປັນຄືນມາຂອງພຣະອົງນີ້, ໂຜດຊ່ວຍລູກໃຫ້ໄດ້ກັບເປັນຄືນມາຮ່ວມກັບພຣະອົງ ດ້ວຍການເປີດໃຈຮັບເອົາການໃຫ້ອະໄພແລະສັນຕິສຸກແຫ່ງການໃຫ້ອະໄພຈາກພຣະອົງ. ເພື່ອລູກຈະໄດ້ກາຍເປັນເຄື່ອງມືແຫ່ງສັນຕິສຸກຂອງພຣະອົງໃນຊີວິດຂອງລູກດ້ວຍ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ